ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 16 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 30 APR 2015

ສຳນັກງານ ຄຄຊ
ເຂົ້າ ເລກທີ...443.....
ວັນທີ...30 APR 2015
ໂທລະສັບ 021 217770

- ທ່ານ ... - PA ... 3/5/2015 ...

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 06/04/2015 ຫາ 10/04/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

I. **ວຽກງານການເມືອງແນວຄິດ**

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. **ວຽກງານວິຊາສະເພາະ**

1. **ສະພາບເສດຖະກິດເງິນຕາສາກົນ**

1.1 **ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນການຈ້າງງານ ຫຼຸດລົງຈາກ 212.000 ຄົນ ໃນເດືອນ 2/2015 ເປັນ 189.000 ຄົນ ໃນເດືອນ 3/2015.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 31/03/2015 | ອາທິດນີ້ 07/04/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,0785 | 1,0914 | -1,19% |
| ໂດລາ/ເຢນ | 120,10 | 119,66 | 0,37% |
| ໂດລາ/ບາດ | 32,53 | 32,51 | 0,07% |
| ໂດລາ/ເປໂຊ | 44,72 | 44,50 | 0,49% |
| ໂດລາ/ຣູເປັຍ | 13.077,22 | 12.973,56 | 0,80% |
| ໂດລາ/ໂດລາສິງກະໂປ | 1,3754 | 1,3556 | 1,46% |
| ໂດລາ/ຢວນ | 6,2018 | 6,1926 | 0,15% |

1.2 **ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 7,81% ຈາກ 47,91 ໂດລາ/ບາເຣວ ມາເປັນ 51,65 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກເພີ່ມຂຶ້ນ ເຫັນໄດ້ຈາກຄັງສຳຮອງນ້ຳມັນທາງການຄ້າຂອງສະຫະລັດປະຈຳອາທິດທີ 27/3/2015 ຫຼຸດລົງ 4,26 ລ້ານບາເຣວ ແລະ ການອ່ອນຄ່າລົງຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 2,47% ຈາກ 1.182,45 ໂດລາ/ອອນ ມາເປັນ 1.211,70 ໂດລາ/ອອນ ຍ້ອນການອ່ອນຄ່າລົງຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,10% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,09% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດ ອ່ອນຄ່າລົງ 0,33% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,20% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,30% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,08% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,70% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,13% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 24/03/2015 | | | ອາທິດນີ້ 31/03/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.094,36 | 8.125,00 | 8.110,65 | 8.087,79 | 8.117,94 | 8.102,35 | 0,08% | 0,09% | 0,10% |
| ບາດ | 250,56 | 251,78 | 251,22 | 251,46 | 252,58 | 252,06 | -0,36% | -0,32% | -0,33% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.111,25 | 8.138,47 | 8.124,86 | 8.104,87 | 8.129,87 | 8.117,37 | 0,08% | 0,11% | 0,09% |
| ບາດ | 250,83 | 252,00 | 251,41 | 251,32 | 252,52 | 251,92 | -0,20% | -0,21% | -0,20% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,21% | 0,17% | 0,18% | 0,21% | 0,15% | 0,19% | | | |
| ບາດ | 0,11% | 0,09% | 0,08% | -0,06% | -0,02% | -0,05% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 1,21% ທຽບໃສ່ວັນທີ 03/04/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 34,13%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 0,70% ເມື່ອທຽບໃສ່ວັນທີ 03/04/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 22,49%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 06/04/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 20,78 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 62,95 ລ້ານໂດລາ ແລະ ຂາຍໂດລາໄດ້ 42,17 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 848,17 ລ້ານບາດ (ໃນນີ້ ຊື້ບາດໄດ້ 541,67 ລ້ານບາດ ແລະ ຂາຍບາດໄດ້ 1.389,84 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 14,88% ແຕ່ເພີ່ມຂຶ້ນ 10,73% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 12,63 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 263,41 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 7,82 ລ້ານໂດລາ ແຕ່ຊື້ບາດສຸດທິ ຈຳນວນ 74,80 ລ້ານບາດ;

---

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 19,85 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 1.070,48 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 30/03/2015 | | ອາທິດທີ 06/04/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 25,24 | 270,48 | 21,63 | 365,95 | -14,32% | 35,30% |
| - ທ/ຄທຸລະກິດອື່ນໆ | 51,87 | 127,57 | 41,32 | 175,72 | -20,33% | 37,74% |
| ລວມຊື້: | 77,11 | 398,05 | 62,95 | 541,67 | -18,36% | 36,08% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 26,36 | 164,13 | 17,86 | 281,49 | -32,26% | 71,51% |
| - ທ/ຄທຸລະກິດອື່ນໆ | 20,03 | 1.182,12 | 24,31 | 1.108,36 | 21,41% | -6,24% |
| ລວມຂາຍ: | 46,38 | 1.346,24 | 42,17 | 1.389,84 | -9,09% | 3,24% |
| ຊື້-ຂາຍສຸດທິ ທທກ | 30,72 | -948,20 | 20,78 | -848,17 | -32,37% | -10,55% |
| ຜິດດ່ຽງ ຊື້-ຂາຍ | 39,84 | -238,21 | 33,01 | -156,58 | -683,59% | 816,90% |
| ມູນຄ່າການຊື້-ຂາຍ | 123,49 | 1.744,29 | 105,12 | 1.931,51 | -14,88% | 10,73% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 4,00 | 100,00 | 0,00 | 193,80 | | |
| - ທຫລ ຂາຍໃຫ້ ທທກ | 5,35 | 173,00 | 7,82 | 119,00 | | |
| ຊື້-ຂາຍສຸດທິ ທຫລ | -1,35 | -73,00 | -7,82 | 74,80 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 14,58 | 334,39 | 12,63 | 263,41 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 50,17 | 1.324,34 | 50,00 | 1.070,48 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 40,82 | 0,00 | 30,15 | 0,00 | | |
| ຊື້-ຂາຍສຸດທິ ທຫລ | 9,36 | 1.324,34 | 19,85 | 1.070,48 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 03/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,17% ຫຼຸດລົງ 0,24% ຈາກ 1,41% ໃນເດືອນ 02/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 21,89 ລ້ານໂດລາ ສະຫະລັດທຽບເທົ່າ, ຫຼຸດລົງ 73,8% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 718 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 18,22% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 504,17 ຕື້ກີບ ຫຼຸດລົງ 35,49% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (03-09/04/2015) ມີຈຳນວນ 1.429 ຄັ້ງ ໂດຍມີມູນຄ່າ 274,23 ຕື້ກີບ ຫຼຸດລົງ 38,77% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 429 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.468,26 ຈຸດ ຫຼຸດລົງ 3,89% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 1,01 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,57 ຕື້ກີບ ເພີ່ມຂຶ້ນ 802,22% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 86,62% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.865 ກີບ/ຮຸ້ນ ຫຼຸດລົງ 42 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.102 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 41,89 ລ້ານກີບ ຫຼຸດລົງ 92,99% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 48,80% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,57%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.477 ກີບ/ຮຸ້ນ ຫຼຸດລົງ 438 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,00 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,49 ຕື້ກີບ ເພີ່ມຂຶ້ນ 5.369,73% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 78,76% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 9.304 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 430 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,00 ລ້ານກີບ ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.808 ກີບ/ຮຸ້ນ ຫຼຸດລົງ 1 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10.317 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 39,28 ລ້ານກີບ ຫຼຸດລົງ 59,63% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 15,71% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,73%[5].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການເຮັດວຽກຮ່ວມກັບ ຊ່ຽວຊານ IMF ເພື່ອປຶກສາຫາລືແຜນພັດທະນາຕະຫຼາດ ລະຫວ່າງທະນາຄານຂອງ ສປປ ລາວ;
- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມປຶກສາຫາລື ກ່ຽວກັບການພັດທະນາໂປຣແກຣມຊື້-ຂາຍ ພັນທະບັດ, ❷ ກອງປະຊຸມຄົ້ນຄວ້າຮ່າງນິຕິກຳ ຮ່ວມກັບໜ່ວຍງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ກອງປະຊຸມເຜີຍແຜ່ນິຕິກຳ ແລະ ແນະນຳການຊຸກຍູ້ຂະບວນການແຂ່ງຂັນ-ຍ້ອງຍໍ ເພື່ອສະເຫຼີມສະຫຼອງ 2 ວັນປະຫວັດສາດ ທີ່ ທຫລ;
- ສຳເຣັດການເປີດກອງປະຊຸມ ປຶກສາຫາລືກ່ຽວກັບການຕີມູນຄ່າທາງບັນຊີຕໍ່ບ້ວງລົງທຶນເງິນສົດສະກຸນເອີໂຣຮ່ວມກັບກົມນະໂຍບາຍ, ກົມບັນຊີ-ການເງິນ ແລະ ກົມເຕັກໂນໂລຊີຂໍ້ມູນຂ່າວສານ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ອົງການຈັດຕັ້ງມະຫາຊົນໄດ້ສຳເລັດການຈັດກອງປະຊຸມໃຫຍ່ ຄື: ກອງປະຊຸມໃຫຍ່ຄັ້ງທີ IX ຂອງສະຫະພັນແມ່ຍິງ ທຫລ ແລະ ກອງປະຊຸມໃຫຍ່ຄັ້ງທີ VII ຂອງຊາວໜຸ່ມ ທຫລ ທີ່ ສະຖາບັນການທະນາຄານ;
- ສຳເລັດການຂຶ້ນແຜນເຜີຍແຜ່ນິຕິກຳຫຼັກ ແລະ ນິຕິກຳຍ່ອຍໃຫ້ແກ່ສະຖາບັນການເງິນຈຸລະພາກທີ່ສ້າງຕັ້ງໃໝ່.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ສ້າງລະບົບໂປຣແກຣມ Client Utility ເພື່ອຊ່ວຍບັນດາສະຖາບັນການເງິນຈຸລະພາກໃນການເກັບກຳ ແລະ ລາຍງານຂໍ້ມູນສິນເຊື່ອຕາມ IFF;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າ ຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າລະບຽບວ່າດ້ວຍ Financial Service provider ກ່ຽວກັບສະຖາບັນການເງິນ;
- ກະກຽມຈັດກອງປະຊຸມກັບຊ່ຽວຊານໂຄງການ AFP ເພື່ອປຶກສາຫາລື ແລະ ສ້າງຄວາມເປັນເອກະພາບຕໍ່ກັບຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງໂຄງການ BOL-AFP ກ່ອນທີ່ຈະລາຍງານທ່ານ ຜູ້ວ່າການ ທຫລ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ